

ບົດກ່າວ:

# ໃນພາວະວິກິດຂອງໂລກ ການລົງທຶນໃສ່ວຽກງານໂພສະນາການແມ່ນເປັນວາລະຮີບດ່ວນ

**ໂດຍ: ພະນະທ່ານ ເພັດ ພົມພິທັກ**

ລັດຖະມົນຕີ ກະຊວງແຜນການ ແລະການລົງທຶນ, ສປປ ລາວ

ນະຄອນຫຼວງວຽງຈັນ | ກອງປະຊຸມສຸດຍອດຊັບສິນດ້ານມະນຸດຄັ້ງທີ 2

26 ມິຖຸນາ 2024

ສປປ ລາວ
ກອງປະຊຸມສຸດຍອດ
ຊັບສິນດ້ານມະນຸດ ຄັ້ງທີ II
ໂພຊະນາການທີ່ດີແມ່ນສັບສິນດ້ານມະນຸດ

LAO PDR
2ND HUMAN CAPITAL SUMMIT
NUTRITION - THE FOUNDATION OF HUMAN CAPITAL

# ການລົງທຶນໃສ່ວຽກງານໂພສະນາການ ແມ່ນວາລະທີ່ສຳຄັນ ແລະ ຮີບດ່ວນຂອງລັດຖະບານ ສປປ ລາວ

**1.8 ລ້ານຄົນ**

**2020, ໄດ້ຮັບຜົນຈາກພາວະຂາດໂພສະນາການ**

ການຂາດໂພສະນາການ ແມ່ນມີຜົນກະທົບທາງລົບແກ່ການເຕີບໂຕທາງດ້ານເສດຖະກິດ ແລະຄວາມຮັ່ງມີຂອງປະເທດ

**33%**

**2020, ເດັກນ້ອຍລຸ່ມ 5 ປີ ແມ່ນມີຄວາມສູງທຸດມາດຕະຖານ**

ການຂາດໂພສະນການໃນໄລຍະ 1000 ວັນແລກຂອງຊີວິດ ແມ່ນເປັນສາເຫດໃຫ້ເດັກມີຄວາມສູງຫຼຸດມາດຕະຖານ ແລະ ມີຜົນກະທົບຕໍ່ພັດທະນາການທາງຮ່າງກາຍ, ມັນສະໝອງ, ການຮຽນຮູ້, ລາຍຮັບ ແລະສຸຂະພາບ

# ອັດຕາຂາດສານອາຫານໃນລະດັບຮຸນແຮງແມ່ນເປັນບັນຫາຊ້ຳເຮື້ອ ຊຶ່ງຮຽກຮ້ອງໃຫ້ມີການແກ້ໄຂຢ່າງຮີບດ່ວນ




*Source: National Information Platform for Nutrition, 2024. https://nipn.lsb.gov.la/dashboard/npan.php*

**ການຈັດບຸລິມະສິດການລົງທຶນໃສ່ການພັດທະນາ ແລະຈັດຕັ້ງປະຕິບັດການບໍລິການທີ່ຈໍາເປັນດ້ານໂພສະນາແມ່ນວາລະທີ່ສໍາຄັນ ເພື່ອຈະຕັດວົງຈອນການຂາດໂພສະນາການ ແລະ ປັບປຸງຊັບສິນດ້ານມະນຸດ**

# ວຽກງານໂພສະນາການ ແມ່ນຕິດພັນກັບຫຼາຍຂະແໜງການ ແລະເພື່ອໃຫ້ມີໂພສະນາການທີ່ດີ ມີຄວາມຈໍາເປັນຕ້ອງລົງທຶນໃສ່ຂະແໜງການທີ່ກ່ຽວຂ້ອງຕ່າງໆ

**ການປະສານງານກັບຫຼາຍຂະແໜງການ:** ໂດຍອີງໃສ່ຫຼັກຖານ ແລະຄວາມຄຸ້ມຄ່າໃນການລົງທຶນ ເພື່ອມາຈັດລຽງບຸລິມະສິດຂອງການບໍລິການດ້ານໂພສະນາການທີ່ຈໍາເປັນ, ພ້ອມກັນນັ້ນຕ້ອງໄດ້ມີຕ້ອງມີການປະສານງານຢ່າງກົມກຽວເພື່ອຮັບປະກັນວ່າຊຸດບໍລິການດ້ານໂພສະນາມີງົບປະມານພຽງພໍໃນການຈັດຕັ້ງປະຕິບັດ, ການປະສານ ແລະການຕິດຕາມຊຸກຍູ້,




**ຊຶ່ງຈະສາມາດຫຼຸດອັດຕາເດັກ (ເຕ້ຍ) ລວງສູງບໍ່ໄດ້ມາດຕະຖານ ແລະຫຼຸດອັດຕາຂາດໂພສະນາການ**

# ຂໍ້ມູນຫຼັກຖານທາງໂພຊະນາການລະດັບສາກົນໄດ້ຢັ້ງຢືນໃຫ້ເຫັນວ່າ ທຸກໆ 1 $ (ໂດລາສະຫະລັດ) ຂອງການລົງທຶນໃນວຽກໂພຊະນາການ, ປະເທດນັ້ນໆຈະໄດ້ຮັບຜົນຕອບເເທນຄືນ 16 $ (ໂດລາສະຫະລັດ).

- ສປປ ລາວ ໄດ້ລົງທຶນດ້ານໂພຊະນາການໄປເເລ້ວມູນຄ່າ 186.17 ລ້ານ $ ((ໂດລາສະຫະລັດ) ນັບຕັ້ງເເຕ່ປີ 2020 ເຖິງ 2022
- 90% ຂອງການໃຊ້ຈ່າຍທາງດ້ານໂພຊະນາການທັງໝົດໃນປະເທດມາຈາກຄູ່ຮ່ວມມືພັດທະນາ
- ປັບປຸງການຄຸ້ມຄອງ ເເລະການນໍາໃຊ້ງົບປະມານໃຫ້ມີປະສິດທິພາບ ພ້ອມທັງລະດົມທຶນພາຍໃນປະເທດ ເພື່ອຈັດສັນ






# ບົດຮຽນຕົວຈິງໃນຫຼາຍປະເທດໃນການຈັດສັນງົບປະມານເພີ່ມໃຫ້ແກ່ວຽກງານໂພສະນາການ

## ໂຣວັນດາ:

- ໃນລະຫວ່າງປີງົບປະມານ 2017/2018-2020/21 ໄດ້ຈັດງົບປະມານເຂົ້າໃນການຈັດຕັ້ງປະຕິບັດມາດຕະການທີ່ຕິດພັນກັບວຽກໂພສະນາເກີດເພີ່ມຂຶ້ນ
- ລັດຖະບານໄດ້ສ້າງ ແລະນຳໃຊ້ລະບົບຕິດຕາມການຈັດສັນ ແລະນຳໃຊ້ງົບປະມານທີ່ມາຈາກຫຼາຍແຫຼ່ງທຶນເຂົ້າໃນການຈັດຕັ້ງປະຕິບັດແຜນນະໂຍບາຍ ແລະແຜນງານຕ່າງທີ່ເປັນບຸລິມະສິດຂອງຊາດ.

## ອິນໂດເນເຊຍ:

- ນຳໃຊ້ລະບົບຕິດຕາມການຈັດສັນ ແລະການນຳໃຊ້ງົບປະມານເຂົ້າໃນການຈັດຕັ້ງມາດຕະການທີ່ເປັນບຸລິມະສິດໃນການປັບປຸງໂພສະນາການ.
- ພາຍໃຕ້ການຊີ້ນຳຈາກກະຊວງການເງິນ ແລະກະຊວງແຜນການ ຈະເຮັດໃຫ້ການນຳໃຊ້ງົບປະມານມີປະສິດທິພາບ ແລະເພີ່ມຄວາມເປັນເຈົ້າການ ແລະຄວາມຮັບຜິດຊອບໃນ

# ເພີ່ມທະວີການລັດຕັ້ງປະຕິບັດ ເປົ້າໝາຍທີ່ກຳນົດໃນຂອງແຜນປະຕິບັດງານ ດ້ານໂພສະນາການແຫ່ງຊາດ NPAN




- ໂພສະນາການ ເປັນໜຶ່ງໃນຍຸດທະສາດຂອງລັດຖະບານເພື່ອປັບປຸງຊັບສິນດ້ານມະນຸດ ແລະ ການເຕີບໂຕຂອງເສດຖະກິດ

- ເປົ້າໝາຍດັ່ງກ່າວຈະສາມາດບັນລຸໄດ້ ຖ້າຫາກມີການຫຼຸດອັດຕາຂາດໂພສະນາການລົງ ໂດຍສະເພາະອັດຕາລວງສູງບໍ່ໄດ້ມາດຖານ ຊຶ່ງຈະຕ້ອງໄດ້ສືບຕໍ່ເຮັດວຽກຮ່ວມກັນຢ່າງເຂັ້ມແຂງ

- ຊຶ່ງນີ້ຈະເປັນພື້ນຖານທີ່ເຂັ້ມແຂງໃຫ້ແກ່ການພັດທະນາ ຂອງສປປ ລາວ.


ສາທາລະນະລັດ ປະຊາທິປະໄຕ
ປະຊາຊົນລາວ